**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0517----/ກປ

ນະຄອນຫຼວງວຽງຈັນ, ວັນທີ 25 JAN 2024

# ໜັງສືແຈ້ງຕອບ

**ຮຽນ:** ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.

**ເລື່ອງ:** ສະເໜີຫົວຂໍ້ເອກະສານ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງກະຊວງກະສິກຳ ແລະ ປ່າໄມ້ ເພື່ອນຳເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານ ປະຈຳປີ 2024.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2401/ຫສນຍ, ລົງວັນທີ 12 ທັນວາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 25 ມັງກອນ 2024.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດສະເໜີ ຫົວຂໍ້ເອກະສານ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງກະຊວງກະສິກຳ ແລະ ປ່າໄມ້ ເພື່ອນຳເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານ ປະຈຳປີ 2024 ຈຳນວນ 14 ຫົວຂໍ້. ໃນນີ້, ເປັນຫົວຂໍ້ທີ່ຕົກຄ້າງມາແຕ່ປີ 2023 ຈຳນວນ 07 ຫົວຂໍ້ ແລະ ສະເໜີໃໝ່ ຈຳນວນ 07 ຫົວຂໍ້, ຊຶ່ງປະກອບມີ ຮ່າງກົດໝາຍ 03 ສະບັບ (ສ້າງໃໝ່ 01ສະບັບ, ປັບປຸງ 02 ສະບັບ), ຮ່າງດຳລັດ 08 ສະບັບ (ສ້າງໃໝ່ 05 ສະບັບ, ປັບປຸງ 03 ສະບັບ), ຍຸດທະສາດ 03 ສະບັບ (ສ້າງໃໝ່ 02 ສະບັບ, ປັບປຸງ 01 ສະບັບ) ດັ່ງລາຍລະອຽດ ລຸ່ມນີ້:

| ລ/ດ | ຫົວຂໍ້ເອກະສານ | ຄາດຄະເນເດືອນ | ກົມທີ່ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|
| 1 | ຮ່າງ ກົດໝາຍ ວ່າດ້ວຍສະຫະກອນ (ສ້າງໃໝ່) | ມັງກອນ | ກົມສົ່ງເສີມກະສິກຳ ແລະ ສະຫະກອນ | |
| 2 | ຮ່າງ ຍຸດທະສາດ ປ່າໄມ້ ຮອດປີ 2035 ແລະ ວິໄສທັດຮອດປີ 2050 (ປັບປຸງ) | ກຸມພາ | ກົມປ່າໄມ້ | ຕົກຄ້າງ ປີ 2023 |
| 3 | ຮ່າງ ດຳລັດ ວ່າດ້ວຍການເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ (ປັບປຸງ) | ມີນາ | ກົມລ້ຽງສັດ ແລະ ການປະມົງ | ຕົກຄ້າງ ປີ 2023 |

| | | | | |
|---|---|---|---|---|
| 4 | ຮ່າງ ດຳລັດ ວ່າດ້ວຍການຄຸ້ມຄອງການຄ້າ ຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (ປັບປຸງ) | ມີນາ | ກົມປ່າໄມ້ | |
| 5 | ຮ່າງ ດຳລັດ ວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້ (ສ້າງໃໝ່) | ມີນາ | ກົມກວດກາປ່າໄມ້ | ຕົກຄ້າງ ປີ 2023 |
| 6 | ຮ່າງ ກົດໝາຍ ວ່າດ້ວຍກະສິກຳ (ສະບັບປັບປຸງ) | ພຶດສະພາ | ກົມປູກຝັງ | |
| 7 | ຮ່າງ ດຳລັດ ວ່າດ້ວຍທີ່ດິນກະສິກຳ (ສ້າງໃໝ່) | ມິຖຸນາ | ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ | ຕົກຄ້າງ ປີ 2023 |
| 8 | ຮ່າງ ດຳລັດ ວ່າດ້ວຍການສົ່ງເສີມຜະລິດກະສິກຳແບບມີຂໍ້ຜູກພັນສັນຍາ (ສ້າງໃໝ່) | ກໍລະກົດ | ກົມສົ່ງເສີມກະສິກຳ ແລະ ສະຫະກອນ | ຕົກຄ້າງ ປີ 2023 |
| 9 | ຮ່າງ ກົດໝາຍ ວ່າດ້ວຍຊົນລະປະທານ (ປັບປຸງ) | ສິງຫາ | ກົມຊົນລະປະທານ | |
| 10 | ຮ່າງ ດຳລັດ ວ່າດ້ວຍການຄຸ້ມຄອງກອງທຶນພັດທະນາການລ້ຽງສັດ (ສ້າງໃໝ່) | ກັນຍາ | ກົມລ້ຽງສັດ ແລະ ການປະມົງ | |
| 11 | ຮ່າງ ດຳລັດ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ (ປັບປຸງ) | ກັນຍາ | ກົມພັດທະນາຊົນນະບົດ | |
| 12 | ຮ່າງ ດຳລັດ ວ່າດ້ວຍການຄຸ້ມຄອງຝຸ່ນ (ສ້າງໃໝ່) | ຕຸລາ | ກົມປູກຝັງ | |
| 13 | ຮ່າງ ຍຸດທະສາດ ຈັດສັນພູມລຳເນົາ ແລະ ອາຊີບ (ສ້າງໃໝ່) | ຕຸລາ | ກົມພັດທະນາຊົນນະບົດ | ຕົກຄ້າງ ປີ 2023 |
| 14 | ຮ່າງ ຍຸດທະສາດ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ (ສ້າງໃໝ່ ປັບປຸງຫົວຂໍ້ຈາກ ແຜນແມ່ບົດ ການພັດທະນາຊົນນະບົດຮອບດ້ານ) | ພະຈິກ | ກົມພັດທະນາຊົນນະບົດ | ຕົກຄ້າງປີ 2023 |

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານ ລມຕ, ຮລມຕ ທ່ານລະ 01 ສະບັບ (ໃຊ້ຕາງລາຍງານ);
2. ຫ້ອງການ 01 ສະບັບ (ເພື່ອຕິດຕາມ);
3. ບັນດາກົມກ່ຽວຂ້ອງ ພາກສ່ວນລະ 01 ສະບັບ (ເພື່ອກະກຽມ);
4. ພະແນກນິຕິກຳ, ຫກ 01 ສະບັບ (ເພື່ອຕິດຕາມ);
5. ເກັບຮັກສາໄວ້ 01 ສະບັບ.